ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# 2 ໜ່ວຍພັກຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ 2020



ໜ່ວຍພັກກົມຈັດຕັ້ງແລະພະນັກງານ ແລະ ໜ່ວຍພັກຫ້ອງການ ທຫລ ໄດ້ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ 2020 ເຊິ່ງພິທີມອບ-ຮັບໄດ້ຈັດຂຶ້ນຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທຫລ ໃນຕອນເຊົ້າຂອງວັນທີ 03 ກັນຍາ 2021 ພາຍໃຕ້ການເປັນປະທານຂອງ ສະຫາຍ ຄໍາວົງ ທິບພະວົງ ຮອງເລຂາຄະນະພັກ ທຫລ, ຮອງຜູ້ວ່າການ ທຫລ ໂດຍມີຄະນະໜ່ວຍພັກ ແລະ ສະມາຊິກພັກຈາກພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ສະຫາຍ ເພັດສະຖາພອນ ແກ້ວວົງວິຈິດ ເລຂາໜ່ວຍພັກຫ້ອງການ ທຫລ ໄດ້ຜ່ານບົດສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ 2020 ແລະ ແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນຕໍ່ໜ້າ.

ສະຫາຍຮອງເລຂາຄະນະພັກ ທຫລ ໄດ້ ໂອ້ລົມຕໍ່ພິທີໃນຄັ້ງນີ້ວ່າ: ນັບແຕ່ປີ 2020 ເປັນຕົ້ນມາ, ສັງເກດເຫັນວ່າຜົນສໍາເລັດຂອງ 2 ໜ່ວຍພັກຍາດມາໄດ້ຍ້ອນຄວາມຮັບຜດຊອບສູງໃນການເອົາໃຈໃສ່ຊີ້ນໍາ-ນໍາພາການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນຢ່າງຕັ້ງໜ້າ ແລະ ມີຜົນສໍາເລັດຫລາຍດ້ານ ໂດຍສະເພາະແມ່ນການເປັນເສນາທິການໃຫ້ຂັ້ນເທິງໃນວຽກງານສຶກສາອົບຮົມການເມືອງແນວຄິດ, ວຽກງານພັກ-ພະນັກງານ, ການປັບປຸງການຈັດຕັ້ງ, ວຽກງານບໍລິຫານ-ສັງລວມ, ການເງິນ ແລະ ອື່ນໆ ອັນພົ້ນເດັ່ນແມ່ນໄດ້ເປັນເຈົ້າການກະກຽມດໍາເນີນກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ IV ຢ່າງມີຜົນສໍາເລັດຕາມລະດັບຄາດໝາຍທີ່ວາງໄວ້ ຍ້ອນພວກສະຫາຍມີຄວາມ

ສາມັກຄີເປັນຈິດໜຶ່ງໃຈດຽວ, ມີແບບແຜນການນຳພາທີ່ສອດຄ່ອງຕາມຫຼັກການຂອງພັກ, ມີໂຄງປະກອບການຈັດຕັ້ງທີ່ເປັນລະບົບ, ບຸກຄະລາກອນມີຄວາມຮູ້ຄວາມສາມາດໃນລະດັບທີ່ແນ່ນອນ, ມີການປັບປຸງເນື້ອໃນຂອງການຮ່ວມຊີວິດໃຫ້ແທດເໝາະກັບສະພາບການຕົວຈິງ, ມີການຕິດຕາມຊຸກຍູ້ກວດກາ ແລະ ສ່ອງແສງລາຍງານວຽກງານຢ່າງເປັນປະຈຳ, ພ້ອມທັງມີການປະສານສົມທົບລະຫວ່າງຂັ້ນເທິງກັບຂັ້ນລຸ່ມ, ພາຍໃນກັບພາຍນອກຢ່າງກົມກຽວໃນບາງວຽກງານທີ່ມີສາຍກ່ຽວພັນ. ສິ່ງສຳຄັນພວກສະຫາຍໄດ້ເອົາໃຈໃສ່ກໍ່ສ້າງປັບປຸງຕົນເອງຕາມ 5 ຫຼັກການ ແລະ 3 ທິດນຳຂອງພັກ ຕິດພັນກັບ 5 ເນື້ອໃນຂອງການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.








#ຂ່າວ ແລະ ພາບໂດຍ: ນາງ ປາໄນ ພັນທະລາ